**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງການຕ່າງປະເທດ

ກົມອາຊຽນ

ເລກທີ: 844 /ອຊ

ນະຄອນຫລວງວຽງຈັນ, ວັນທີ 20 ພະຈິກ 2023

# ໜັງສືແຈ້ງເຊີນການປະມູນສົມທຽບລາຄາ

**ເຖິງ**: ບັນດາບໍລິສັດອອກແບບ ແລະ ຜະລິດບັດ

**ເລື່ອງ**: ເຊີນເຂົ້າຮ່ວມຍື່ນຊອງປະມູນສຳລັບການອອກແບບ ແລະ ຜະລິດສາຍຫ້ອຍບັດຄະນະຜູ້ແທນເຂົ້າຮ່ວມກອງປະຊຸມອາຊຽນພາຍໃຕ້ 3 ເສົາຄໍ້າປະຊາຄົມອາຊຽນ ທີ່ຈະຈັດຢູ່ ສປປ ລາວ ໃນປີ 2024.

- ອີງຕາມການເຫັນດີຂອງຄະນະນຳກະຊວງການຕ່າງປະເທດ ລົງວັນທີ 30 ຕຸລາ 2023 ກ່ຽວກັບການເລີ່ມຂະບວນຈັດຊື້-ຈັດຈ້າງບາງໜ້າວຽກຮີບດ່ວນ ເພື່ອກະກຽມເປັນເຈົ້າພາບ ແລະ ປະທານອາຊຽນຂອງ ສປປ ລາວ ໃນປີ 2024.

ກົມອາຊຽນ ຂໍຖືເປັນກຽດຮຽນເຊີນມາຍັງບັນດາບໍລິສັດ ທີ່ມີຄວາມສົນໃຈ, ມີຄວາມສາມາດ ແລະ ມີປະສົບປະການດ້ານການອອກແບບ ແລະ ຜະລິດສາຍຫ້ອຍບັດ ເຂົ້າຮ່ວມການປະມູນສົມທຽບລາຄາສຳລັບການອອກແບບ ແລະ ຜະລິດສາຍຫ້ອຍບັດຄະນະຜູ້ແທນເຂົ້າຮ່ວມກອງປະຊຸມອາຊຽນພາຍໃຕ້ 3 ເສົາຄໍ້າປະຊາຄົມອາຊຽນ ທີ່ຈະຈັດ ຢູ່ ສປປ ລາວ ໃນປີ 2024 ເພື່ອໃຫ້ເລີ່ມນຳໃຊ້ໃນວັນທີ 1 ມັງກອນ 2024 ເປັນຕົ້ນໄປ.

ການປະມູນຈະດຳເນີນຕາມຂັ້ນຕອນການສົມທຽບລາຄາ ທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄຳແນະນຳ ກ່ຽວກັບການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019. ບໍລິສັດທີ່ມີຄວາມສົນໃຈ ສາມາດຕິດຕໍ່ພົວພັນທີ່ ກົມອາຊຽນ, ກະຊວງການຕ່າງປະເທດ ຕາມໂມງລັດຖະການ (ຊັ້ນ 4, ຕຶກ B, ໂທລະສັບ: 021-415109) ຕັ້ງຢູ່: ຖະໜົນ 23 ສິງຫາ, ບ້ານ: ໂພນໄຊ, ເມືອງ: ໄຊເສດຖາ, ນະຄອນຫລວງວຽງຈັນ ເພື່ອຈະແນະນຳເອກະສານລາຍລະອຽດ.

ເອກະສານປະມູນຄົບຊຸດທີ່ເປັນພາສາລາວສາມາດຊື້ໄດ້ເລີ່ມແຕ່ວັນທີ 20 ພະຈິກ 2023 ເປັນຕົ້ນໄປ, ໃນລາຄາ 3,000,000 ກີບ (ສາມລ້ານກີບ) ສຳລັບການປະມູນ ແລະ ຈຳນວນເງິນດັ່ງກ່າວນີ້ ຈະບໍ່ມີການສົ່ງຄືນ. ຊອງປະມູນຕ້ອງສົ່ງໃຫ້ກົມອາຊຽນ, ກະຊວງການຕ່າງປະເທດ ຊ້າສຸດ ບໍ່ໃຫ້ກາຍ ເວລາ 09:00 ໂມງ ຂອງວັນທີ 11 ທັນວາ 2023. ຊອງປະມູນທີ່ສົ່ງມາທາງເອເລັກໂຕຼນິກຈະບໍ່ຮັບພິຈາລະນາ ແລະ ຊອງປະມູນທີ່ສົ່ງຊ້າກວ່າເວລາທີ່ກຳນົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນ ໂດຍບໍ່ມີການເປີດຊອງ. ທຸກໆຊອງປະມູນ ຈະໄດ້ເປີດໃນເວລາ 09:30 ໂມງ ຂອງວັນທີ 11 ທັນວາ 2023 ທີ່ ຫ້ອງປະຊຸມກົມອາຊຽນ ຊັ້ນ 4, ຕຶກ B, ກະຊວງການຕ່າງປະເທດ ໂດຍຊ້ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງຜູ້ປະມູນທີ່ສົນໃຈເຂົ້າຮ່ວມນຳ.

ທຸກຊອງປະມູນຕ້ອງໄດ້ປະກອບໜັງສືຄ້ຳປະກັນການປະມູນ ຫລື ໜັງສືຄ້ຳປະກັນການປະມູນຈາກທະນາຄານ ຊຶ່ງມູນຄ່າຂອງການຄ້ຳປະກັນບໍ່ໃຫ້ຫລຸດ 2% (ສ່ວນຮ້ອຍ) ຂອງລາຄາປະມູນ ມາພ້ອມ.

**ຫົວໜ້າກົມ**

ຈາຕຸລົງ ບົວສີສະຫວັດ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງການຕ່າງປະເທດ
ກົມອາຊຽນ

ເລກທີ: 843 /ອຊ

ນະຄອນຫລວງວຽງຈັນ, ວັນທີ 20 ພະຈິກ2023

## ເງື່ອນໄຂ ແລະ ຄຳແນະນຳສຳລັບຜູ້ເຂົ້າຮ່ວມປະມູນສົມທຽບລາຄາ

- ອີງຕາມກົດໝາຍ ວ່າດ້ວຍ ການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄຳແນະນຳ ກ່ຽວກັບ ການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.

ບໍລິສັດທີ່ເຂົ້າຮ່ວມການປະມູນການອອກແບບ ແລະ ຜະລິດສາຍຫ້ອຍບັດຄະນະຜູ້ແທນເຂົ້າຮ່ວມກອງປະຊຸມອາຊຽນພາຍໃຕ້ 3 ເສົາຄໍ້າປະຊາຄົມອາຊຽນ ທີ່ຈະຈັດ ຢູ່ ສປປ ລາວ ໃນປີ 2024 ແມ່ນຕ້ອງມີເງື່ອນໄຂ ດັ່ງລຸ່ມນີ້:

**<u>ເງື່ອນໄຂທົ່ວໄປ</u>**

1. ຕ້ອງມີໃບທະບຽນວິສາຫະກິດ ແລະ ມີທຶນຈົດທະບຽນ 300 ລ້ານກີບ ຂຶ້ນໄປ;
2. ຕ້ອງມີໃບອະນຸຍາດດຳເນີນທຸລະກິດຕາມລະບຽບກົດໝາຍຂອງ ສປປ ລາວ;
3. ມີໃບທະບຽນອາກອນ ຫຼື ໃບຢັ້ງຢືນຊຳລະອາກອນທີ່ໃຊ້ໄດ້ເຖິງສິ້ນປີ 2023;
4. ມູນຄ່າລວມສິນຄ້າທີ່ສະເໜີມາໃນຊອງປະມູນຕ້ອງເປັນເງິນກີບ ແລະ ລວມພາສີອາກອນຕ່າງໆ;
5. ຕ້ອງມີໃບຢັ້ງຢືນຖານະທາງການເງິນຂອງບໍລິສັດ 300 ລ້ານກີບ ຂຶ້ນໄປ ພາຍໃນ 01 ປີ. (ຢັ້ງຢືນບັນຊີສຳຮອງຈາກທະນາຄານ);
6. ຕ້ອງມີເງິນຄໍ້າຊອງປະມູນ 2% ຂອງມູນຄ່າ (ແບງກາລັງຕີ);
7. ບໍລິສັດຕ້ອງມີຄວາມສາມາດ ແລະ ປະສົບການດ້ານນີ້ ຫຼື ປະສົບການວຽກທີ່ຄ້າຍຄືກັນນີ້ມາກ່ອນ ຢ່າງໜ້ອຍ 02 ປີ;
8. ບໍລິສັດຕ້ອງອອກແບບ ແລະ ຜະລິດສາຍຫ້ອຍບັດຄະນະຜູ້ແທນ ເຂົ້າຮ່ວມກອງປະຊຸມອາຊຽນພາຍໃຕ້ 3 ເສົາຄໍ້າປະຊາຄົມອາຊຽນ ທີ່ຈະຈັດ ຢູ່ ສປປ ລາວ ໃນປີ 2024 ໂດຍໃຫ້ມີກາໝາຍປະທານອາຊຽນຂອງ ສປປ ລາວ ແລະ ຕ້ອງສຳເລັດກ່ອນວັນທີ 30 ທັນວາ 2023 ຫຼັງຈາກເຊັນສັນຍາ;
9. ຊອງປະມູນຕ້ອງແຍກອອກເປັນ 02 ຊອງ ຄື: 1. ຊອງເຕັກນິກ ແລະ 2 ຊອງລາຄາ (ກາແດງ 01 ຊຸດ ແລະ ກອບປີ້ 01 ຊຸດ).
10. ຕ້ອງເປັນບໍລິສັດທີ່ບໍ່ຖືກດຳເນີນຄະດີໃນ ສປປ ລາວ.

ດັ່ງນັ້ນ, ຈຶ່ງກຳນົດເງື່ອນໄຂ ແນະນຳຜູ້ທີ່ຈະເຂົ້າຮ່ວມການປະມູນລາຄາຂ້າງເທິງນັ້ນ.

**ຫົວໜ້າກົມ**

ກະຊວງການຕ່າງປະເທດ
ກົມອາຊຽນ

**ຈາຕຸລົງ ບົວສີສະຫວັດ**